

# SuPER WE Coffee

## ວຽກເດັ່ນຂອງໂຄງການ ທັນວາ 2024 - ກຸມພາ 2025

**ທັນວາ:** ສົ່ງເສີມການລ້າງກາເຟທີ່ມີປະສິດທິພາບດ້ວຍເຄື່ອງຈັກລ້າງເມືອກກາເຟ.

**ມັງກອນ:** ການຝຶກອົບຮົມຄູຝຶກ (ToT) ກ່ຽວກັບການຄວບຄຸມຄຸນນະພາບ ແລະ ລະບົບການຕິດຕາມແຫຼ່ງທີ່ມາກາເຟ.

**ກຸມພາ:** ກອງປະຊຸມປະຈຳປີຂອງໂຄງການ SuPER WE ເພື່ອປະເມີນຄວາມຄືບໜ້າ ແລະ ເພີ່ມທະວີການຮ່ວມມື.

## ຜູ້ທີ່ໄດ້ຮັບຜົນປະໂຫຍດ

ທາງກົງ

**400** ຊາວສວນກາເຟ

**280** ແມ່ຍິງຊົນເຜົ່າ

ທາງອ້ອມ

**4,463** ປະຊາຊົນ

**2,217** ແມ່ຍິງຊົນເຜົ່າ

## ປະຫວັດຄວາມເປັນມາ

ໂຄງການ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ໂດຍຜ່ານລະບົບ ຕ່ອງໂສ້ການສ້າງມູນຄ່າເພີ່ມ ຂອງຜະລິດຕະພັນກາເຟ ທີ່ມີຈັນຍາບັນ ແລະ ເປັນມິດກັບສິ່ງແວດລ້ອມ ໃນແຂວງ ເຊກອງ ຈະໄດ້ສ້າງຄວາມອາດສາມາດ ໃຫ້ຊາວສວນກາເຟ ສາມາດຍົກສະມັດຕະພາບ ການຜະລິດກາເຟໃຫ້ໄດ້ຜົນຜະລິດສູງ ແລະ ມີຄຸນະພາບ ແລະ ເພີ່ມລາຍຮັບໃນຄອບຄົວໃຫ້ສູງຂຶ້ນ ໂດຍຜ່ານການສະໜັບສະໜູນສ້າງຕັ້ງ ສູນແປຮູບກາເຟ, ສະໜອງເຕັກນິກການປູກ ແລະ ການແປຮູບໃຫ້ແກ່ກຸ່ມຜະລິດ, ສະໜອງອຸປະກອນທີ່ຈຳເປັນໃນການປູກ ແລະ ແປຮູບກາເຟ. ຈຸດປະສົງຂອງໂຄງການແມ່ນເພື່ອ ສະໜັບສະໜູນການພັດທະນາເສດຖະກິດ ທີ່ເປັນມິດກັບສິ່ງແວດລ້ອມ, ເພີ່ມທະວີການຮ່ວມມືກັບໜ່ວຍງານສະຫະກອນ ເຊັ່ນດຽວກັນກັບການສ້າງຄວາມ ສາມາດໃຫ້ແກ່ແມ່ຍິງຜູ້ຜະລິດກາເຟໂດຍເຊື່ອມໂຍງການຮ່ວມມື ວຽກງານບົດບາດທາງເພດ, ການເປັນຜູ້ນຳ ແລະ ຜູ້ປະກອບການ.

## ທີ່ຕັ້ງໂຄງການ







## ທັນວາ

## ເສີມຂະຫຍາຍພື້ນຖານໂຄງລ່າງການຕາກກາເຟ



ໂດຍຜ່ານຄວາມພະຍາຍາມຢ່າງຕໍ່ເນື່ອງຂອງໂຄງການ SuPER WE, ຊາວກະສິກອນກາເຟໄດ້ຮັບຜົນປະໂຫຍດຈາກການປັບປຸງເຮືອນຕາກກາເຟ ຊ່ວຍເພີ່ມຄວາມສາມາດໃນການຕາກກາເຟທີ່ເໝາະສົມ ແລະ ໃຫ້ມີຄຸນນະພາບສູງ. ໂຄງການ ໄດ້ສະໜອງອຸປະກອນສ້າງເຮືອນຕາກກາເຟໃຫ້ສູນແປຮູບກາເຟ 17 ແຫ່ງ ທົ່ວ 15 ບ້ານເປົ້າໝາຍ, ເຮັດໃຫ້ຊາວກະສິກອນສາມາດປຸງແຕ່ງກາເຟໄດ້ ເຖິງວ່າສະພາບອາກາດບໍ່ເອື້ອອຳນວຍກໍ່ຕາມ. ເຮືອນຕາກກາເຟເຫຼົ່ານີ້ຊ່ວຍຄວບຄຸມອຸນຫະພູມ ແລະ ຄວາມຊຸ່ມໄດ້ດີ, ເຮັດໃຫ້ຂະບວນການຕາກກາເຟມີຄວາມສະດວກສະບາຍກ່ອນເກົ່າ, ຕໍ່ເນື່ອງ ແລະ ມີຄຸນນະພາບສູງ.





## ທັນວາ

## ສົ່ງເສີມການລ້າງກາເຟທີ່ມີປະສິດທິພາບດ້ວຍເຄື່ອງຈັກລ້າງເມືອກກາເຟ



ມາຮອດທ້າຍເດືອນທັນວາ 2024, ໂຄງການໄດ້ສະໜອງຈັກລ້າງເມືອກກາເຟ ຈຳນວນ 15 ໜ່ວຍໃຫ້ແກ່ 15 ສູນແປຮູບກາເຟ ໃນບ້ານເປົ້າໝາຍຂອງໂຄງການ, ເຊິ່ງໄດ້ຊ່ວຍໃຫ້ການລ້າງກາເຟມີປະສິດທິພາບດີຂຶ້ນ ແລະ ຊ່ວຍຫຼຸດຜ່ອນການນຳໃຊ້ແຮງງານໄດ້ຫຼາຍ. ການນຳໃຊ້ເຄື່ອງຈັກລ້າງເມືອກກາເຟໄດ້ຊ່ວຍໃຫ້ຊາວກະສິກອນສາມາດປະຢັດເວລາ ແລະ ຊັບພະຍາກອນ ພ້ອມນັ້ນກໍ່ຍັງຮັບປະກັນຄວາມສະອາດເມັດກາເຟ ແລະ ຫຼຸດຜ່ອນນ້ຳເສຍຈາກຂະບວນການລ້າງ. ເມື່ອໃຊ້ເວລາ ແລະ ແຮງງານຫນ້ອຍລົງ, ຊາວກະສິກອນກໍ່ມີເວລາຫຼາຍຂຶ້ນເພື່ອສຸມໃສ່ວຽກອື່ນໆ, ເຊິ່ງໄດ້ຊ່ວຍເສີມຂະຫຍາຍການຜະລິດຂອງຄົວເຮືອນ ແລະ ສ້າງຄວາມຍືນຍົງໃຫ້ພວກເຂົາ.




## ສະໜັບສະໜູນພິທີສະເຫຼີມສະຫຼອງ ວັນສາກົນ ເພື່ອລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ




ວັນທີ 5 ທັນວາ 2024, ສະຫະພັນແມ່ຍິງເມືອງດາກຈຶງ ໄດ້ຈັດພິທີສະເຫຼີມສະຫຼອງ ລະນຶກວັນສາກົນ ເພື່ອລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ ຢູ່ທີ່ຫ້ອງປະຊຸມ ສູນໄອຊີທີ ( ICT ) ໂຮງຮຽນ ມສ ດາກຈຶງ ໂດຍໃຫ້ກຽດເຂົ້າຮ່ວມຂອງທ່ານ ເພັງນາ ຈັນທະພອນ ກຳມະການພັກແຂວງ ເລຂາພັກເມືອງເຈົ້າເມືອງ-ເມືອງດາກຈຶງ, ກຳມະການພັກເມືອງ, ຫົວໜ້າ-ຮອງຫ້ອງການພ້ອມດ້ວຍພະນັກງານຫຼັກແຫຼ່ງ ແລະ ນ້ອງນັກຮຽນເຂົ້າຮ່ວມນຳ.




## ສ້າງຄວາມເຂັ້ມແຂງໃຫ້ແກ່ຊາວກະສິກອນກາເຟທີ່ເປັນ ແມ່ຍິງເຂົ້າຮ່ວມງານເຄືອຂ່າຍການຕະລາດພາຍໃນ



ວັນທີ 30 ພະຈິກ ຫາ ວັນທີ 4 ທັນວາ 2024, ໂຄງການ SuPER WE ໄດ້ນຳພາ ຕົວແທນສະມາຊິກກຸ່ມຜະລິດກາເຟພູດອຍດາກຈຶງ 4 ທ່ານ (ຍິງ) ເຂົ້າຮ່ວມວາງສະແດງ ຜະລິດຕະພັນກາເຟຂອງກຸ່ມໃນງານບຸນຊ່ວງເຮືອປະເພນີແຂວງເຊກອງ. ການເຂົ້າຮ່ວມ ງານຄັ້ງນີ້ຊ່ວຍໃຫ້ຕົວແທນກຸ່ມ ໄດ້ຮຽນຮູ້ການສ້າງເຄືອຂ່າຍ, ພົບປະກັບລູກຄ້າ ແລະ ການໂຄສະນາຜະລິດຕະພັນກາເຟ. ຜ່ານການກະກຽມ ແລະ ເຂົ້າຮ່ວມວາງສະແດງໄດ້ ເຮັດໃຫ້ທີມງານທັງ 4 ທ່ານ ມີຄວາມຫມັ້ນໃຈໃນການນຳສະເໜີຜະລິດຕະພັນຂອງຕົນ, ເຂົ້າໃຈຄວາມຕ້ອງການຂອງລູກຄ້າຫຼາຍຂຶ້ນ, ຊ່ວຍເສີມສ້າງທັກສະທາງທຸລະກິດໃຫ້ ເຂົາເຈົ້າ ແລະ ຂະຫຍາຍການເຂົ້າເຖິງຕະຫຼາດໃຫ້ແກ່ກຸ່ມກາເຟພູດອຍດາກຈຶງອີກດ້ວຍ.



ມັງກອນ

# ສົ່ງເສີມຄວາມສາມາດຂອງຊາວກະສິກອນກາເຟດາກຈຶງ ດ້ານຫຼັກການສະຫະກອນ: ການເຄື່ອນໄຫວຢ້ຽມຢາມ ແລະ ແລກປ່ຽນດ້ານເຕັກນິກ ຄັ້ງທີ 2



ວັນທີ 14-15 ມັງກອນ 2025, ກອງປະຊຸມປຶກສາຫາລືແລກປ່ຽນການສະຫະກອນ ຄັ້ງທີ 2 ໄດ້ໄຂຂຶ້ນໂດຍມີຜູ້ເຂົ້າຮ່ວມທັງໝົດ 53 ທ່ານ, ໃນນັ້ນມີຊາວກະສິກອນ ກາເຟ 40 ທ່ານ (ຍິງ 19 ທ່ານ) ຈາກ 15 ບ້ານ. ກອງປະຊຸມຄັ້ງນີ້ໄດ້ເປັນເວທີທີ່ ສຳຄັນໃຫ້ຊາວກະສິກອນໄດ້ຮຽນຮູ້ກ່ຽວກັບຮູບແບບສະຫະກອນ, ບົດຮຽນການສ້າງ ຕັ້ງ ແລະ ເຂົ້າຮ່ວມສະຫະກອນ, ເຂົ້າໃຈລະບຽບຫຼັກການທີ່ກ່ຽວຂ້ອງ ແລະ ການເຂົ້າ ເຖິງແຫຼ່ງທຶນສະໜັບສະໜູນ.

ແຂກພິເສດສອງທ່ານ ຈາກສະຫະກອນຊາວສວນໃຈກາເຟ ໄດ້ແບ່ງປັນບົດຮຽນທີ່ ເປັນປະໂຫຍດກ່ຽວກັບການເຄື່ອນໄຫວ ແລະ ຄຸ້ມຄອງສະຫະກອນ, ໂດຍກ່າວເຖິງ ບັນດາຫົວຂໍ້ຄື: ການເຂົ້າເຖິງຕະຫຼາດ, ການຊ່ວຍເຫຼືອດ້ານເຕັກນິກລະຫວ່າງສະມາ ຊິກສະຫະກອນດ້ວຍກັນ, ກອງທຶນສຸກເສີນ, ແລະ ເງິນກູ້ດອກເບ້ຍຕ່ຳ. ກອງປະຊຸມ ໄດ້ສຳເລັດລົງດ້ວຍການປຶກສາຫາລືແລກປ່ຽນທີ່ມີຄວາມໝາຍສຳຄັນ ທີ່ຈະນຳໄປສູ່ ການສ້າງສະຫະກອນສຳລັບກຸ່ມຜະລິດກາເຟພູດອຍດາກຈຶງ ໃນອະນາຄົດ.



switchasia GRANTS PROGRAMME · Haliéus COOPERATIVES FOR DEVELOPMENT · 4FORM · coop International Cooperative Alliance Asia and Pacific · ITC International Training Centre · FAIRTRADE ITALIA





## ການຝຶກອົບຮົມຄູຝຶກ (ToT) ກ່ຽວກັບການຄວບຄຸມຄຸນນະພາບ ແລະ ລະບົບການຕິດຕາມແຫຼ່ງທີ່ມາກາເຟ



ກິດຈະກຳການຝຶກອົບຮົມຄູຝຶກ (ToT) ໄດ້ໃຫ້ຄວາມຮູ້ແກ່ຊາວກະສິກອນກາເຟ 26 ທ່ານ ແລະ ຄູ່ຮ່ວມງານພາກລັດ ເຊິ່ງປະກອບມີທັກສະສຳຄັນໃນການຄວບຄຸມຄຸນນະພາບກາເຟ ແລະ ລະບົບການຕິດຕາມແຫຼ່ງທີ່ມາກາເຟ. ການຝຶກອົບຮົມໄດ້ດຳເນີນເປັນເວລາ 5 ວັນ, ຈັດຂຶ້ນແຕ່ວັນທີ 27-31 ມັງກອນ 2025, ໄດ້ສຸມໃສ່ເຕັກນິກການເກັບກາເຟ, ການປຸງແຕ່ງ ແລະ ວິທີການຕິດຕາມ.

ຜູ້ເຂົ້າຮ່ວມໄດ້ຮຽນຮູ້ເຕັກນິກ ແລະ ປະຕິບັດຕົວຈິງໃນການເກັບກາເຟ ແລະ ການຄັດແຍກ, ຮຽນຮູ້ວິທີການປຸງແຕ່ງຕ່າງໆເຊັ່ນ: ການແປຮູບແບບປຽກ, ນ້ຳເຜິ້ງ, ແລະ ແບບທຳມະຊາດ. ພວກເຂົາເຈົ້າຍັງໄດ້ຮຽນຮູ້ເຕັກນິກການສີກາເຟໝາກຊ້ອມ ການເກັບຮັກສາເມັດກາເຟ (ໝາກດຳ, ຂາວ ແລະ ຂຽວ) ແລະ ການປະເມີນຄຸນນະພາບກາເຟດ້ວຍການຂົ້ວ ແລະ ຊິມກາເຟ. ການຝຶກອົບຮົມໄດ້ເນັ້ນໃສ່ຄວາມສຳຄັນຂອງການປຸງແຕ່ງກາເຟແບບພິເສດ ແລະ ນຳໃຊ້ແບບຟອມບັນທຶກແຫຼ່ງທີ່ມາຂອງກາເຟ ເພື່ອຮັບປະກັນຄວາມໂປ່ງໃສ ແລະ ມີຄວາມຮັບຜິດຊອບ.







switchasia GRANTS PROGRAMME · Halieus COOPERATIVES FOR DEVELOPMENT · 4FORM Ente di Formazione Nazionale · COOP International Cooperative Alliance Asia and Pacific · ITC ILO International Training Centre · FAIRTRADE ITALIA




## February

# ຜູ້ຜະລິດກາເຟພູດອຍດາກຈຶງ ໄດ້ຮຽນຮູ້ຈາກການທັດສະ ນະສຶກສາຢ້ຽມຢາມ ສະຫະກອນຜູ້ຜະລິດກາເຟໄຈ ແລະ ເຕັກໂນໂລຊີຖັງໝັກແກັດຊີວະພາບສໍາລັບຄົວເຮືອນ ຢູ່ເມືອງປາກຊ່ອງ




ຄະນະກໍາມະການກຸ່ມຜະລິດກາເຟພູດອຍດາກຈຶງ ແລະ ຄູ່ຮ່ວມງານພາກລັດ ຈໍານວນ 16 ທ່ານ, ໃນນັ້ນມີຍິງ 7 ທ່ານ, ໄດ້ລົງຢ້ຽມຢາມເມືອງປາກຊ່ອງ, ແຂວງຈໍາປາສັກ ໃນວັນທີ 7 ກຸມພາ 2025 ເພື່ອຮຽນຮູ້ຈາກສະຫະກອນຜູ້ຜະລິດກາເຟໄຈ ເຊິ່ງມີປະສົບການໃນການຄຸ້ມຄອງສະຫະກອນມາຍາວນານ. ການຢ້ຽມຢາມຄັ້ງນີ້ ແມ່ນເພື່ອແນໃສ່ເພີ່ມຄວາມເຂົ້າໃຈກ່ຽວກັບການຜະລິດກາເຟ, ການຄວບຄຸມຄຸນນະພາບ, ການຄຸ້ມຄອງສະຫະກອນ.

ຜູ້ເຂົ້າຮ່ວມໄດ້ມີການປຶກສາຫາລື ແລະ ແລກປ່ຽນກັນຢ່າງເລິກເຊິ່ງ ກັບສະມາຊິກຂອງສະຫະກອນຊາວສວນໄຈກາເຟ. ພວກເຂົາມີຄວາມສົນໃຈເປັນພິເສດຕໍ່ວິທີການຮັກສາມາດຕະຖານຄຸນນະພາບກາເຟໃຫ້ສູງ ແລະ ວິທີການຂະຫຍາຍຕະຫຼາດ ຂອງສະຫະກອນຜູ້ຜະລິດກາເຟໄຈ. ຄວາມຮູ້ທີ່ໄດ້ຮັບຈາກການຢ້ຽມຢາມຄັ້ງນີ້ ຈະເປັນເຄື່ອງມືໃນການສ້າງຄວາມເຂັ້ມແຂງໃຫ້ແກ່ກຸ່ມຜູ້ຜະລິດກາເຟພູດອຍດາກຈຶງ, ປັບປຸງວິທີການເຮັດວຽກ ແລະ ຍົກສູງຄຸນນະພາບຂອງກາເຟຂອງພວກເຂົາ.



ຕໍ່ມາໃນຕອນບ່າຍ, ທີມງານໄດ້ເດີນທາງໄປບ້ານຫ້ວຍເສັດ ເພື່ອຖອດຖອນບົດຮຽນການນໍາໃຊ້ຖັງຫມັກຊີວະພາບ Home-biogas ສໍາລັບຄົວເຮືອນ. ຄະນະທີມງານໄດ້ຮັບຟັງການອະທິບາຍ ພ້ອມກັບຮັບຊົມການສາທິດນໍາໃຊ້ຖັງຫມັກຊີວະພາບຈາກຄອບຄົວທີ່ໄດ້ນໍາໃຊ້ຕົວຈິງ. ລະບົບດັ່ງກ່າວໃຊ້ຖັງໝັກເພື່ອປ່ຽນສິ່ງເສດເຫຼືອອິນຊີໃຫ້ເປັນອາຍແກັດສໍາລັບປຸງອາຫານ ແລະ ຝຸ່ນຊີວະພາບ, ສະໜອງພະລັງງານແບບຍືນຍົງໃຫ້ແກ່ຄົວເຮືອນ.



ຖັງຫມັກຊີວະພາບ Home-biogas ສໍາລັບຄົວເຮືອນສາມາດນໍາໃຊ້ສິ່ງເສດເຫຼືອຈາກການແປຮູບກາເຟ ເຊັ່ນ: ເປືອກ ແລະ ນໍ້າລ້າງເມືອກກາເຟ ເປັນວັດຖຸດິບ. ແຕ່ຈະໄດ້ມີການສຶກສາເພີ່ມເຕີມເພື່ອປະເມີນຄວາມເປັນໄປໄດ້ ແລະ ປະສິດທິຜົນຂອງລະບົບ, ໂດຍມີເປົ້າຫມາຍເພື່ອຈັດການສິ່ງເສດເຫຼືອ ແລະ ການສະໜອງພະລັງງານທາງເລືອກສໍາລັບຄົວເຮືອນທີ່ຜະລິດກາເຟ.





## February

# ຊາວສວນຜູ້ຜະລິດກາເຟພູດອຍດາກຈຶງທີ່ເປັນແມ່ຍິງ ຮ່ວມວາງສະແດງຜະລິດຕະພັນ ໃນງານບຸນກາເຟ-ຊາ ແລະ ຜົນຜະລິດກະສິກຳພູພຽງບໍລະເວນ

ຊາວສວນຜູ້ຜະລິດກາເຟພູດອຍດາກຈຶງທີ່ເປັນແມ່ຍິງ ໄດ້ມີຄວາມພາກພູມໃຈທີ່ໄດ້ເປັນຕົວແທນກຸ່ມຜະລິດກາເຟຂອງຕົນເຂົ້າຮ່ວມງານບຸນກາເຟ-ຊາ ແລະ ຜົນຜະລິດກະສິກຳພູພຽງບໍລະເວນ, ເຊິ່ງຈັດຂຶ້ນແຕ່ວັນທີ 8-10 ກຸມພາ 2025. ໃນງານດັ່ງກ່າວໄດ້ມີຫຼາຍກ່ວາ 50 ຮ້ານ ຮ່ວມວາງສະແດງຜະລິດຕະພັນກາເຟ ແລະ ຊາຫຼາກຫຼາຍຊະນິດ. ແມ່ຍິງ 4 ທ່ານ ຈາກກຸ່ມຜູ້ຜະລິດກາເຟບ້ານຄູນໄຊ, ດາກຢອຍ, ແລະ ດາກເດັນ ໄດ້ເຂົ້າຮ່ວມ, ແບ່ງປັນຄວາມຮູ້ວິຊາການ ແລະ ຄວາມມຸ່ງໝັ້ນໃນການປູກກາເຟແບບຍືນຍົງ.

ໃນງານດັ່ງກ່າວ, ທີມງານນີ້ໄດ້ແຈກກາເຟສົດໃຫ້ຜູ້ມາຢ້ຽມຊົມຮ້ານວາງສະແດງຂອງຕົນໄດ້ຊີມ. ຜະລິດຕະພັນຂອງພວກເຂົາໄດ້ຮັບຄວາມສົນໃຈຫຼາຍ, ເຮັດໃຫ້ສາມາດຂາຍກາເຟໄດ້ຈຳນວນ 43 ຖົງ ລວມມີ 19 ຖົງ ຂອງລຸ້ນ 200 ກຼາມ ແລະ 24 ຖົງ ຂອງລຸ້ນ100 ກຼາມ. ນອກຈາກເປັນໂອກາດໃນການຂາຍຜະລິດຕະພັນກາເຟ, ງານດັ່ງກ່າວຍັງໄດ້ເປັນໂອກາດທີ່ດີສຳລັບພວກເຂົາໃນການສ້າງເຄືອຂ່າຍກັບຜູ້ເຂົ້າຮ່ວມ. ພວກເຂົາໄດ້ພົບປະກັບຜູ້ຊື້ ແລະ ຜູ້ປະກອບການກາເຟຕ່າງໆ ເພື່ອຄົ້ນຫາຄູ່ຮ່ວມມືທີ່ມີທ່າແຮງ. ການເຂົ້າຮ່ວມງານຄັ້ງນີ້ໄດ້ເຮັດໃຫ້ທີມງານມີປະສົບການໃນການຂາຍຜະລິດຕະພັນຂອງຕົນ, ໄດ້ພົວພັນກັບຜູ້ບໍລິໂພກ, ແລະ ໄດ້ເຂົ້າໃຈຄວາມຕ້ອງການຂອງຕະຫຼາດ.












February

# ກອງປະຊຸມປະຈຳປີຂອງໂຄງການ SuPER WE ເພື່ອປະເມີນຄວາມຄືບໜ້າ ແລະ ເພີ່ມທະວີການຮ່ວມມື



ກອງປະຊຸມຄະນະກຳມະການຄຸ້ມຄອງການຈັດຕັ້ງປະຕິບັດໂຄງການ(IMC) ປະຈຳປີ 2024 ສຳລັບໂຄງການ SuPER WE, ຈັດຂຶ້ນໃນວັນທີ 6 ກຸມພາ 2025, ໄດ້ມີຜູ້ເຂົ້າຮ່ວມ 29 ທ່ານ, ຍິງ 13 ທ່ານ ເພື່ອປະເມີນຜົນສຳເລັດວຽກງານຂອງໂຄງການ ແລະ ສິ່ງທ້າທາຍຕ່າງໆ. ໂດຍການເປັນປະທານຂອງ ທ່ານ ບຸນສຳ ສີສັກ ຮອງຫົວໜ້າພະແນກກະສິກຳ ແລະ ປ່າໄມ້ ແຂວງເຊກອງ ແລະ ເປັນປະທານຮ່ວມໂດຍ ທ່ານ ຄຳສິງ ນາມສະຫວັນ, ຜູ້ອຳນວຍການດ້ານແຜນການ ຂອງ ອົງການແຄຣ໌ ປະຈຳລາວ, ກອງປະຊຸມດັ່ງກ່າວ ໄດ້ມີຕາງໜ້າບັນດາພາກສ່ວນກ່ຽວຂ້ອງເຂົ້າຮ່ວມ, ໃນນັ້ນ ມີຜູ້ຕາງໜ້າຈາກພາກສ່ວນກ່ຽວຂ້ອງຂອງລັດ, ອົງການແຄຣ໌ ປະຈຳລາວ ແລະ ກຸ່ມຜູ້ຜະລິດກາເຟ.



ຈຸດປະສົງຫຼັກຂອງກອງປະຊຸມແມ່ນເພື່ອທົບທວນຄວາມຄືບໜ້າຂອງວຽກງານໃນປີທີ່ຜ່ານມາ, ໂດຍສຸມໃສ່ການຜະລິດກາເຟແບບຍືນຍົງ, ຈັນຍາບັນຂອງການຜະລິດກາເຟ, ແລະ ການສ້າງຄວາມເຂັ້ມແຂງໃຫ້ແມ່ຍິງໃນຕ່ອງໂສ້ມູນຄ່າກາເຟ.



ກອງປະຊຸມດັ່ງກ່າວ ໄດ້ຍົກໃຫ້ເຫັນຄວາມສຳຄັນຂອງການພັດທະນາແບບມີສ່ວນຮ່ວມ ແລະ ການຮ່ວມມື, ໂດຍຜູ້ເຂົ້າຮ່ວມທັງໝົດໄດ້ເນັ້ນຄືນຄວາມມຸ່ງໝັ້ນຕໍ່ ຈຸດປະສົງ ແລະ ເປົ້າໝາຍ ຂອງໂຄງການ. ໃນຂະນະທີ່ໂຄງການກຳລັງກ້າວເຂົ້າສູ່ປີສຸດທ້າຍແລ້ວ, ໂຄງການ SuPER WE ຍັງຢູ່ໃນເສັ້ນທາງທີ່ຈະສືບຕໍ່ສ້າງຄວາມເຂັ້ມແຂງ ໃຫ້ແກ່ຊຸມຊົນທ້ອງຖິ່ນ, ໂດຍສະເພາະແມ່ຍິງ, ແລະ ປະກອບສ່ວນເຂົ້າໃນການຂະຫຍາຍຕົວຂອງການຜະລິດກາເຟແບບຍືນຍົງຂອງແຂວງເຊກອງ.



# ສຽງຂອງການປ່ຽນແປງ

## ການສ້າງຄວາມເຂັ້ມແຂງ ທາງດ້ານ ເສດຖະກິດໃຫ້ແກ່ແມ່ຍິງ

**ບັນທຶກ ແລະ ສຳພາດໂດຍ : ເກດເກສອນ ດວງມີນາ**

**ແມ່ຍິງ 3 ທ່ານ ເຫັນວ່າຕົນເອງໄດ້ກ້າວເຂົ້າສູ່ບົດບາດໃໝ່, ສຽງຂອງພວກເຂົາເຕັມໄປດ້ວຍຄວາມໝັ້ນໃຈ ໃນຂະນະທີ່ເຂົາເຈົ້າໄດ້ແບ່ງປັນຄວາມຮູ້ ແລະ ປະສົບການໃໝ່ໆຂອງຕົນ. ການປ່ຽນແປງຂອງພວກເຂົາໄດ້ເລີ່ມຕົ້ນຂຶ້ນໃນງານເທດສະການວາງສະແດງກາເຟ, ບ່ອນທີ່ພວກເຂົາໄດ້ມີຄວາມເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບອຸດສາຫະກຳກາເຟ ແລະ ຄົ້ນພົບຄຸນຄ່າທີ່ແທ້ຈິງຂອງວຽກງານຂອງຕົນ.**

**ທ່ານນາງ ແກ້ວນາວັນ,** ສະມາຊິກໃນກຸ່ມຜູ້ຜະລິດກາເຟຈາກບ້ານດາກຍອຍ, ໄດ້ຢືນຢັນດ້ວຍຄວາມພາກພູມໃຈ ໂດຍລາວເລົ່າເຖິງປະສົບການຄັ້ງທຳອິດຂອງຕົນທີ່ປຸງກາເຟດ້ວຍເຄື່ອງເຮັດກາເຟ ແລະ ວິທີຊົງດ້ວຍມື. ຄວາມແມ່ນຢໍາໃນການຊັ່ງນໍ້າໜັກ, ການຕົ້ມ ແລະ ລິນນໍ້າໄດ້ກາຍເປັນຄວາມຮູ້ ແລະ ທັກສະໃຫມ່ສໍາລັບລາວ, ເຊິ່ງເຊື່ອມຕໍ່ລາວກັບຄວາມສຳຄັນຂອງການຜະລິດກາເຟ. *"ຂ້າພະເຈົ້າຮູ້ສຶກເປັນກຽດ ແລະ ດີໃຈຫຼາຍທີ່ໄດ້ເຂົ້າຮ່ວມງານວາງສະແດງໃນຄັ້ງນີ້," ທ່ານນາງ ແກ້ວນາວັນ ກ່າວ "ມັນໄດ້ເຮັດໃຫ້ຂ້າພະເຈົ້າມີເຂົ້າໃຈຄວາມສຳຄັນຂອງການຜະລິດກາເຟຫຼາຍກວ່າທີ່ເຄີຍຮູ້ມາກ່ອນ."*



ທ່ານນາງ ພຸດມາລາ (ຊ້າຍ) ແລະ ທ່ານນາງ ແກ້ວນາວັນ (ຂວາ)



ທ່ານນາງ ພຸດທີວັນ

**ທ່ານນາງ ພຸດມາລາ** ສະມາຊິກກຸ່ມຜູ້ຜະລິດກາເຟຈາກບ້ານດາກເດັນ, ສະແດງຄຳເຫັນວ່າ ງານວາງວະແດງດັ່ງກ່າວ ໄດ້ເຮັດໃຫ້ຕົນເອງຮັບຮູ້ກ່ຽວກັບຄວາມຊັບຊ້ອນຂອງການປູກກາເຟ, ການປຸງແຕ່ງ ແລະ ການຂາຍ. "ງານວາງສະແດງນີ້ເຮັດໃຫ້ຂ້າພະເຈົ້າໄດ້ຮຽນຮູ້ສິ່ງໃໝ່ໆຫຼາຍຢ່າງ," ທ່ານນາງ ພຸດມາລາ ກ່າວ *"ມັນໄດ້ກະຕຸ້ນຂ້າພະເຈົ້າໃຫ້ຮຽນຮູ້ຫຼາຍຂຶ້ນ, ພັດທະນາທັກສະຂອງຕົນເອງ ແລະ ໃສ່ໃຈໃນການປູກກາເຟແບບເປັນມິດຕໍ່ສິ່ງແວດລ້ອມ ແລະ ຍືນຍົງ."*

**ທ່ານນາງ ພຸດທີວັນ,** ສະມາຊິກກຸ່ມຜະລິດກາເຟຈາກບ້ານຄູນໄຊ, ກໍ່ໄດ້ຄົ້ນພົບບົດບາດໃໝ່ຂອງຕົນເອງໃນການເປັນຜູ້ຂາຍກາເຟ. "ນີ້ແມ່ນຄັ້ງທຳອິດທີ່ຂ້າພະເຈົ້າໄດ້ມີໂອກາດເຂົ້າຮ່ວມງານວາງສະແດງກາເຟ," ທ່ານນາງ ພຸດທີວັນ ກ່າວ, ນີ້ໄດ້ສະແດງໃຫ້ເຫັນເຖິງການຫັນປ່ຽນຂອງນາງຈາກຜູ້ຜະລິດມາເປັນຜູ້ຂາຍ. *"ດຽວນີ້, ຂ້າພະເຈົ້າບໍ່ພຽງແຕ່ຜະລິດກາເຟ, ແຕ່ຂ້າພະເຈົ້າຍັງຮັບຟັງຄຳຕຳນິຕິຊົມຂອງຜູ້ບໍລິໂພກອີກດ້ວຍ, ເຊິ່ງມັນໄດ້ຊ່ວຍໃຫ້ຂ້າພະເຈົ້າສາມາດນຳມາປັບປຸງທຸກໆຂັ້ນຕອນຂອງຂະບວນການປຸງແຕ່ງກາເຟ".*

switchasia GRANTS PROGRAMME | Haliéus | 4FORM | coop International Cooperative Alliance Asia and Pacific | ITC International Training Centre | FAIRTRADE ITALIA

## ຕິດຕໍ່ພວກເຮົາໄດ້ທີ່:


**ທ່ານ ນາງ ແກ້ວອຳພອນ ສຸວັນນະພູມ**

ຫົວໜ້າ ອົງການ

ເບີໂທ: (+856) 20 5564 2235

ອີເມລ: keoamphone.souvannaphoum@care.org

**ທ່ານ ຄຳປະເສີດ ເຈີດຈິງທາວ**

ຫົວໜ້າ ຫ້ອງການແຂວງ ເຊກອງ

ເບີໂທ: (+856) 20 7741 8956

ອີເມລ: khampaseuth.cheutchingthao@care.org

**ທ່ານ ລີໄຊ ໂພທິສັດ**

ຜູ້ປະສານງານດ້ານການສື່ສານ

ເບີໂທ: (+856) 20 7777 9501

ອີເມລ: Lyxay.phothisut@care.org

ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ ຕູ້ ປ.ນ 4328, ຖະໜົນໜອງສ້າງທໍ່, ບ້ານ ໜອງສ້າງທໍ່, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ
ເບີໂທ (+856-21) 217 727

ຫ້ອງການ ເຊກອງ
ເມືອງ ລະມາມ, ແຂວງ ເຊກອງ, ສປປ ລາວ
ເບີໂທ (+856-38) 215 010

Lao.Info@care.org   www.careint.org.la   @careinlaos   CARE International in Lao PDR


care®